ນິທານລາວ

# ໝາໄນອວດເກັ່ງ

ໃນປ່າດົງແຫ່ງນຶ່ງ ມີໝາຈອກແລະ ໝາໄນອາສັຍຢູ່ກິນນຳກັນ. ຫຼັງຈາກໄປຊອກຫາກິນມາແລ້ວ ສັດທັງສອງກໍມັກຈະເລົ່າຄືນ ສິ່ງທີ່ຕົນເຄີຍພົບເຫັນເຫດຮ້າຍຕ່າງໆໃຫ້ກັນຟັງ. ໝາຈອກເອົ້າສູ່ໝາໄນຟັງວ່າ :

ເຮີ້ຍ ! ນັບແຕ່ເຮົາໄດ້ພົບເຫັນມານີ້ ບໍ່ມີຫຍັງຈະສູ້ກັບຄົນໄດ້, ຄົນຕັ້ງເກັ່ງແທ້ ໆ ແມ່ນແຕ່ແຮດ,ເສືອ, ສິງ, ຊ້າງກໍບໍ່ເອົາຊະນະຄົນໄດ້, ສັດນ້ອຍຄືພວກເຮົາແຮງບໍ່ມີທົນທາງສູ້ຄົນໄດ້.

ໝາໄນເປັນສັດທີ່ມີນິສັຍອວດເກັ່ງ ຈຶ່ງບໍ່ຍອມເຊື່ອຟັງໝາຈອກ. ໝາໄນເອົ້າອວດສະຫາວຂຶ້ນວ່າ : ໂອຍ ! ສໍາຄົນມັນຈະເກັ່ງປານໃດທອະ ! ເຮົາຢາກພໍ້ເບິ່ງເດ ! ຄັນໂຕເຫັນຄົນເທື່ອໜ້າບອກເຮົາໂລດ, ເຮົາຊິຫຍໍ້າໃຫ້ໂຕເບິ່ງ, ເອົາໃຫ້ມັນໝູບອາບຟາບຢູ່ກັບບ່ອນພຸ້ນແຫຼະ.

ຫຼາຍມື້ຕໍ່ມາ, ສັດທັງຫຼາຍກໍອອກໄປຫາກິນຕາມປົກກະຕິ, ເມື່ອໄປຮອດແຄມປ່າແຫ່ງນຶ່ງ, ບັງເອີນໝາຈອກຫຼຽວເຫັນຄົນຜູ່ນຶ່ງຍ່າງມາ ມັນກໍຊີ້ບອກໃຫ້ໝາໄນເບິ່ງ, ສ່ວນໝາຈອກເອງ ກໍ ຟ້າວຊອກຫາບ່ອນລີ້. ຝ່າຍໝາໄນກໍດີໃຈຮຸ່ນ ໆ ຄິດວ່າເອີ ! ບາດນີ້ລະກູຈະສແດງຄວາມເກັ່ງກ້າໃຫ້ໝາຈອກເບິ່ງ. ບໍ່ພໍຖາວຄົນກໍຍ່າງເຂົ້າມາໃກ້ ໆ ໝາໄນກໍທູບໃສ່ໝາຍຄວາມຈະກັດໃຫ້ມຸ່ນ, ພໍຄົນຫຼຽວເຫັນໝາໄນລາວກໍຟ້າວປົດປືນເພິ່ງອອກລາກບ່າ ແລ້ວຍົກຂຶ້ນຍິງທັນທີ. ສຽງປືນແຜດກ້ອງໄປທົ່ວປ່າ ລູກປືນບິນດາດທົວໝາໄນ ຈົນເຮັດໃຫ້ມັນຢຸດລີ້ງກັບບ່ອນ, ຫູທັງສອງເບື້ອງຂອງມັນດັບອື້ ຢ່າງບໍ່ຮູ້ທີບຮູ້ແດນ.

ເມືອຄົນຜູ່ນັ້ນໜີໄປໄກແລ້ວ, ໝາຈອກທີ່ລີ້ຈອບເບິ່ງເຫດການ ກໍອອກມາຊອກຫາ ແລະ ເຫັນໝາໄນພວມຢືນສັ່ນທົດໆຢູ່ກາງປ່າ ໝາຈອກຈຶ່ງຖາມວ່າ : ເຮີຍ ! ເປັນຈັ່ງໃດສູ່ວ ນຶ່ງເຫັນລິດຄົນແລ້ວບໍ່ ? ໝາໄນໜ້າຫູ່ຫາເຫຼືອງຕອບທັງສັ່ນທັງເຊັນວ່າ : ໂອຍ ! ຄັນເຮົາແລ່ນໄປເກິງ ແມ່ນບໍ່ຢ້ານລັກດີ້, ອັນນີ້ແມ່ນຫຍັງ ມັນຕັ້ງໄກຕັ້ງສີ່ທ້າວາພຸ້ນ ຄົນພັດແຜງລິດມາໃສ່ເຮົາກ່ອນ, ພໍມັນຍົກຍັ້ງດໍາ ໆ ເທົ້າໃສ່ບ່າແລ້ວກໍມີສຽງດັງຈົນຫູຈະແຕກ ຄັນມັນເປັນແນວນັ້ນ ແມ່ນໃຜເດຈະສູ້ກັບຄົນໄດ້ ມັນເກັ່ງສົນໂຕວ່າເນາະ !

ແຕ່ນັ້ນມາໝາໄນເຫັນຄົນເທື່ອໃດ ມັນກໍແລ່ນຫອບທີ່ລີ້ໄປ ບໍ່ສູ້ໜ້າກັບຄົນອີກ.